ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງການເງິນ**

ເລກທີ: 1618 /ກງ
ນະຄອນຫຼວງວຽງຈັນ, ວັນທີ: 30 ພຶດສະພາ 2019.

# ແຈ້ງການ

**ເຖິງ** : ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ.
**ເລື່ອງ** : ການປັບປຸງກົນໄກ, ຂັ້ນຕອນ ການດຳເນີນງານ ລະຫວ່າງ ການຈົດທະບຽນເອກະສານຂອງ ຂະແໜງຊັບສິນ ແລະ ການອອກທະບຽນອາກອນ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 144/ນຍ, ລົງວັນທີ 8 ພຶດສະພາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 12/ນຍ, ລົງວັນທີ 23/8/2018 ວ່າດ້ວຍການຈັດຕັ້ງປະຕິບັດ 8 ມາດຕະການ ຊຸກຍູ້ເສດຖະກິດ.
- ອີງຕາມ ການຕົກລົງເຫັນດີເປັນເອກະພາບຂອງກອງປະຊຸມຮ່ວມ ລະຫວ່າງ ຂະແໜງການກ່ຽວຂ້ອງ ຄັ້ງວັນທີ 13 ພຶດສະພາ 2019.
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມຄຸ້ມຄອງຊັບສິນຂອງລັດ ສະບັບເລກທີ 1073/ຊລ, ລົງວັນທີ 21 ພຶດສະພາ 2019.

ເພື່ອຈັດຕັ້ງຜັນຂະຫຍາຍ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງປະຕິບັດ 8 ມາດຕະການຊຸກຍູ້ເສດຖະກິດໃຫ້ເປັນຮູບປະທຳ ໂດຍສະເພາະມາດຕະການ **2** ກ່ຽວກັບ ການປັບປຸງສິ່ງແວດລ້ອມ ແລະອຳນວຍຄວາມສະດວກໃນການດຳເນີນທຸລະກິດ, ເຊິ່ງໃນໄລຍະຜ່ານມາ ການຈົດທະບຽນເອກະສານບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ແມ່ນຕ້ອງດຳເນີນກ່ອນການອອກທະບຽນອາກອນ. ແຕ່ເນື່ອງຈາກລະບົບການຈົດທະບຽນຊັບສິນຍັງໃຊ້ການຈົດດ້ວຍມື ແລະ ຍັງບໍ່ທັນຫັນເປັນທັນສະໄໝທັນຕາມຄວາມຮຽກຮ້ອງຕ້ອງການ ລວມທັງກົນໄກການອອກໃບມອບເງິນ, ການດຳເນີນຂັ້ນຕອນການຈົດທະບຽນຊັບສິນໃຊ້ເວລາ **1-2** ວັນ, ເຊິ່ງສົ່ງຜົນໃຫ້ການອອກທະບຽນອາກອນ ມີການຊັກຊ້າ. ສະນັ້ນ, ເພື່ອເຮັດໃຫ້ການດຳເນີນຂັ້ນຕອນ ການອອກທະບຽນອາກອນ ມີຄວາມວ່ອງໄວ, ກະຊວງການເງິນຈຶ່ງແຈ້ງມາຍັງ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຊາບດັ່ງນີ້:

1. ນັບແຕ່ວັນທີ 1 ມິຖຸນາ 2019 ເປັນຕົ້ນໄປ ໃນຂັ້ນຕອນການອະນຸຍາດລົງທຶນ, ການຂຶ້ນທະບຽນວິສາຫະກິດ, ຂຶ້ນທະບຽນອາກອນແມ່ນສາມາດດຳເນີນໄດ້ກ່ອນ. ສຳລັບ ຂັ້ນຕອນການຈົດທະບຽນຊັບສິນ, ຈົດທະບຽນສັນຍາສ້າງຕັ້ງ, ສັນຍາຮ່ວມທຶນຂອງບໍລິສັດ ແລະ ເອກະສານຂໍ້ຜູກພັນສັນຍາອື່ນໆ ແມ່ນສາມາດດຳເນີນຕາມພາຍຫຼັງ.
2. ປະຈຸບັນກະຊວງການເງິນ ກຳລັງຄົ້ນຄວ້າປັບປຸງກົນໄກການມອບລາຍຮັບຈາກຊັບສິນຂອງລັດ ແລະ ການຈົດທະບຽນເອກະສານຂອງຂະແໜງຊັບສິນໃຫ້ເປັນລະບົບທີ່ທັນສະໄໝ, ເຊິ່ງຈະເຮັດໃຫ້ການມອບເງິນ ແລະ ການຈົດທະບຽນເອກະສານນຳຂະແໜງຊັບສິນ ໃຊ້ເວລາສັ້ນລົງ ແລະ ສະດວກງ່າຍດາຍຂຶ້ນໃນອະນາຄົດ, ເວລາໃດການກະກຽມສຳເລັດ, ກະຊວງການເງິນຈະແຈ້ງໃຫ້ບັນດາທ່ານຊາບຕື່ມໃນພາຍຫຼັງ ເພື່ອຈັດຕັ້ງປະຕິບັດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການນີ້ດ້ວຍ.

**ລັດຖະມົນຕີກະຊວງການເງິນ**

**ສຳເນົາສົ່ງ:**

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 1 ສະບັບ
- ກະຊວງແຜນການ ແລະ ການລົງທຶນ 1 ສະບັບ
- ກະຊວງອຸດສາຫະກຳ ແລະ ການຄ້າ 1 ສະບັບ
- ຫ້ອງວ່າການນະຄອນຫຼວງວຽງຈັນ ແລະ ບັນດາແຂວງ 1 ສະບັບ

ສົມດີ ດວງດີ

Scanned by CamScanner